ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ 1102---

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ................/ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 17 JUN 2016

# ຄຳສັ່ງແນະນຳເພີ່ມເຕີມ

ຮຽນ: ທ່ານ ຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ການຜັນຂະຫຍາຍເນື້ອໃນຂໍ້ 4 ຂອງ ຄຳສັ່ງແນະນຳ ເລກທີ 1050/ອຄ.ກຂອ ລົງວັນທີ 13 ມິຖຸນາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.

- ອີງຕາມ ດຳລັດ ເລກທີ 522/ນຍ, ລົງວັນທີ 23 ທັນວາ 2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ;
- ອີງຕາມ ຄຳສັ່ງແນະນຳ ເລກທີ 1050/ອຄ.ກຂອ ລົງວັນທີ 13 ມິຖຸນາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງແນະນຳເພີ່ມເຕີມ ດັ່ງນີ້:**

1. ເນື່ອງຈາກວ່າຜະລິດຕະພັນໄມ້ສຳເລັດຮູບທີ່ສົ່ງອອກໄປຕ່າງປະເທດ ແມ່ນບໍ່ຈຳເປັນອອກໃບອະນຸຍາດສົ່ງອອກ, ອີງຕາມ ແຈ້ງການ ເລກທີ 1904/ອຄ.ກຂອ ລົງວັນທີ 30 ກັນຍາ 2011 ວ່າດ້ວຍຂັ້ນຕອນການອອກອະນຸຍາດນຳເຂົ້າ ແລະ ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ແລະ ແຈ້ງການເພີ່ມເຕີມ ເລກທີ 2857/ຫອຄ.ກຂອ ລົງວັນທີ 11 ພະຈິກ 2011 ກ່ຽວກັບການປັບປຸງເນື້ອໃນແຈ້ງການເລກທີ 1904/ອຄ.ກຂອ ລົງວັນທີ 30 ກັນຍາ 2011 ຂໍ້ 1.4. ດັ່ງນັ້ນ, ຂໍ້ 4 ຂອງ ຄຳສັ່ງແນະນຳ ເລກທີ 1050/ອຄ.ກຂອ ລົງວັນທີ 13 ມິຖຸນາ 2016 ຈຶ່ງໝາຍເຖິງໄມ້ທຸກຊະນິດ ນອກຈາກໄມ້ສຳເລັດຮູບທີ່ໄດ້ລົບລ້າງການອອກອະນຸຍາດ ສົ່ງອອກແຕ່ທ້າຍປີ 2011.
2. ໃຫ້ ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງ ຂອງແຂວງ, ນະຄອນຫຼວງວຽງຈັນ ລວມທັງພາກທຸລະກິດ ຮັບຊາບ ກ່ຽວກັບຂັ້ນຕອນການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ ເພື່ອເອກະພາບກັນໃນການຈັດຕັ້ງປະຕິບັດ.
3. ຄຳສັ່ງແນະນຳເພີ່ມເຕີມສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ

ບ ເຂັມມະນີ ພົນເສນາ

<u>ບ່ອນສົ່ງ</u>:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ "ເພື່ອຊາບ"
- ອົງການກວດກາລັດຖະບານ "ເພື່ອຊາບ"
- ກະຊວງການເງິນ "ເພື່ອຊາບ"
- ກະຊວງກະສິກຳ ແລະ ປ່າໄມ້ "ເພື່ອຊາບ"
- ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງວຽງຈັນ "ເພື່ອຊາບ"
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ "ເພື່ອຊາບ"